ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ກຳມາທິການຍຸຕິທຳ

ເລກທີ 391 /ກມຍທ

ນະຄອນຫຼວງວຽງຈັນ, ວັນທີ 07.08.2019.

## ແຈ້ງການ

ຮຽນ : ທ່ານ ປະທານສະພາປະຊາຊົນແຂວງຫຼວງພະບາງ ທີ່ນັບຖື.

ເລື່ອງ: ການລົງຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳ.

- ອີງຕາມ ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016,
- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກຳມາທິການຍຸຕິທຳ ສະບັບເລກທີ 0129/ຄປຈ, ລົງວັນທີ 07 ກັນຍາ 2016.

ກຳມາທິການຍຸຕິທຳ ສະພາແຫ່ງຊາດ ຂໍຖືເປັນກຽດແຈ້ງການມາຍັງທ່ານ ປະທານສະພາປະຊາຊົນແຂວງຫຼວງພະບາງ ກ່ຽວກັບການລົງຕິດຕາມກວດກາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ປະກອບມີ: ຄະດີແພ່ງລະຫວ່າງ: ນາງ ສີທາ ທ່າວ (ໂຈດ) ແລະ ທ້າວ ຄຳພຸຍ (ຈຳເລີຍ) ກ່ຽວເລື່ອງ: ທວງກຳມະສິດທີ່ດິນ, ຄະດີແພ່ງລະຫວ່າງ ທ້າວ ເພັດຈຳພອນ ຊຸນດາລາ (ໂຈດ) ແລະ ນາງ ບຸນທັນ ລັກປະສິດ (ຈຳເລີຍ) ກ່ຽວເລື່ອງ: ທວງເອົາກຳມະສິດທີ່ດິນ ແລະ ຄະດີແພ່ງລະຫວ່າງ ທ້າວ ຈອມສີ (ໂຈດ) ແລະ ທ້າວ ບໍ່ຊົ່ງເຮີ (ຈຳເລີຍ) ກ່ຽວເລື່ອງ: ຂໍ້ຂັດແຍ່ງກ່ຽວກັບກຳມະສິດທີ່ດິນ ຊຶ່ງຜ່ານການກວດກາ, ຄົ້ນຄວ້າ ແລະ ພິຈາລະນາຂອງ ກຳມາທິການຍຸຕິທຳ ເຫັນວ່າຍັງມີຫຼາຍບັນຫາທີ່ຍັງບໍ່ທັນຄົບຖ້ວນ, ພາວະວິໄສ ແລະ ບັນດາຄຳຮ້ອງດັ່ງກ່າວພວມຈະຖືກຈັດຕັ້ງປະຕິບັດຕາມຄຳຕັດສິນຂອງສານ, ປັດຈຸບັນນີ້ກຳມາທິການຍຸຕິທຳ ໄດ້ມີແຜນການລົງຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ບັນດາຄຳຮ້ອງຄືນໃໝ່ ຊຶ່ງກຳລັງຂໍທິດຊີ້ນຳຈາກຄະນະປະຈຳສະພາແຫ່ງຊາດ ເພື່ອຂໍອະນຸມັດລົງເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນ.

ດັ່ງນັ້ນ, ກຳມາທິການຍຸຕິທຳ ສະພາແຫ່ງຊາດ ຈຶ່ງຂໍແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ລໍຖ້າການລົງເກັບກຳຂໍ້ມູນເພີ່ມຕື່ມ ກ່ອນການຈັດຕັ້ງປະຕິບັດ.

ປະທານກຳມາທິການຍຸຕິທຳ

ສະພາແຫ່ງຊາດ ... ກຳມາທິການຍຸຕິທຳ

ດຣ. ບົວຄຳ ທິບພະວົງ

ກຳມາທິການຍຸຕິທຳ, ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ ໂທລະສັບ: 021 417477, ອີເມວ: petition.jtc@gmail.com